ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
===== 000 =====

LALCO
LAO ASEAN LEASING PUBLIC COMPANY

ເລກທີ. 0.0007298
ນະຄອນຫຼວງວຽງຈັນ, ວັນທີ: 04 ຕຸລາ 2021

ຮຽນ: - ທ່ານ ຫົວໜ້າ ສານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
- ທ່ານ ຜູ້ອຳນວຍການໃຫຍ່ ຕະລາດຫຼັກຊັບລາວ
- ບັນດາຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງວັນທີ 04 ຕຸລາ 2021.

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ ລົງວັນທີ 14 ມີນາ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 330/ຕລຊລ ລົງວັນທີ 27 ກັນຍາ 2018;

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຂໍຖືເປັນກຽດແຈ້ງມະຕິສຳຄັນ ຂອງກອງປະຊຸມສະພາບໍລິຫານຄັ້ງວັນທີ 04 ຕຸລາ 2021 ດັ່ງມີລາຍລະອຽດລຸ່ມນີ້.

- ອະນຸມັດການກູ້ຢືມເງິນຈາກ ບໍລິສັດ Varteni Investments Limited ຈຳນວນ 20,000,000 ໂດລາ (ຊາວ ລ້ານ ໂດລາ) ເພື່ອເປັນທຶນໃນການຂະຫຍາຍທຸລະກິດ ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນໃຫ້ ພິຈາລະນາ ແລະ ຮັບຮອງ.
- ອະນຸມັດການກູ້ຢືມເງິນຈາກ ຄຸ່ຮ່ວມພາຍໃນປະເທດ ຈຳນວນ 5,000,000 ໂດລາ (ຫ້າລ້ານ ໂດລາ) ເພື່ອເປັນທຶນ ໃນການຂະຫຍາຍທຸລະກິດ ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນໃຫ້ ພິຈາລະນາ ແລະ ຮັບຮອງ.
- ອະນຸມັດການກູ້ຢືມເງິນຈາກ ທະນາຄານພາຍໃນປະເທດ ຈຳນວນ 4,000,000-12,000,000 ໂດລາ (ສີ່ລ້ານ ຫາ ສິບສອງລ້ານ ໂດລາ) ເພື່ອເປັນທຶນໃນການຂະຫຍາຍທຸລະກິດ ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນໃຫ້ ພິຈາລະນາ ແລະ ຮັບຮອງ.
- ກຳນົດເອົາວັນທີ 12 ຕຸລາ ປີ 2021 ເຊິ່ງເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະ ເຂົ້າຮ່ວມກອງ ປະຊຸມວິສາມັນຜູ້ຖືຮຸ້ນປະຈຳປີ 2021.
- ກຳນົດໃນວັນທີ 29 ຕຸລາ ປີ 2021 ເຊິ່ງເປັນວັນທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2021.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ
ສະພາບໍລິຫານ

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ LAO ASEAN LEASING PUBLIC COMPANY

ທ່ານນາງ ຢຸກິ ສະກ້ອດ